ກະຊວງວິທະຍາສາດແລະເຕັກໂນໂລຊີ
ຫ້ອງການຮັບ
ເລກທີ - 1038 ກວຊ
ລົງວັນທີ 10 JUN 2013
ເວລາ - - 0855
ສົ່ງເຖິງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===========000==========

ລັດຖະບານ

ເລກທີ 158 /ລບ

ນະຄອນຫຼວງວຽງຈັນ, ວັນທີ 4-6-2013

# ດຳລັດ

## ວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

- ອີງຕາມຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02 /ສພຊ, ລົງວັນທີ 06 ພຶດສະພາ 2003 ;
- ອີງຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 04 /ສພຊ, ລົງວັນທີ 25 ກໍລະກົດ 2008 (ສະບັບປັບປຸງ);
- ອີງຕາມໜັງສືສະເໜີຂອງກະຊວງຍຸຕິທຳ ສະບັບເລກທີ 319/ກຍ, ລົງວັນທີ 28 ມີນາ 2013

ລັດຖະບານ ອອກດຳລັດ :

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ຂັ້ນຕອນກ່ຽວກັບການຕີລາຄາ, ການປະມູນຂາຍ ແລະ ການມອບຊັບ ເພື່ອໃຫ້ເຈົ້າໜີ້ ໄດ້ຮັບການໃຊ້ແທນ ແລະ ລູກໜີ້ ໄດ້ປະຕິບັດພັນທະໃຊ້ແທນໜີ້ສິນ ດ້ວຍການຂາຍຊັບທີ່ເປັນສິ່ງຄ້ຳປະກັນ ຫຼື ຊັບທີ່ເປັນກຳມະສິດຂອງລູກໜີ້ ຫຼື ຊັບທີ່ໄດ້ຮັບສິດຈາກເຈົ້າຂອງຊັບ ແນໃສ່ເຮັດໃຫ້ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ, ວ່ອງໄວ, ເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

### ມາດຕາ 2 ການຕີລາຄາຊັບ

ການຕີລາຄາຊັບ ແມ່ນການປະເມີນລາຄາ ຫຼື ກຳນົດມູນຄ່າຊັບຕາມສະພາບຄວາມເປັນຈິງຂອງຊັບແຕ່ລະໄລຍະ ໂດຍຄະນະກຳມະການຕີລາຄາຊັບ.

**ມາດຕາ 3 ການຂາຍຊັບ**

ການຂາຍຊັບ ແມ່ນການຂາຍວັດຖຸສິ່ງຂອງທີ່ເປັນຫຼັກຊັບຄໍ້າປະກັນ, ຊັບທີ່ເປັນກໍາມະສິດຂອງຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫຼື ຊັບທີ່ໄດ້ຮັບສິດຈາກເຈົ້າຂອງຊັບ ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ພາຍຫຼັງໄດ້ຕີລາຄາແລ້ວ.

**ມາດຕາ 4 ການປະມູນຂາຍຊັບ**

ການປະມູນຂາຍຊັບ ແມ່ນການຂາຍຊັບຂອງຜູ້ຖືກປະຕິບັດຄໍາຕັດສິນຂອງສານໂດຍຜ່ານຄະນະກໍາມະການປະມູນ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແຕ່ສອງຄົນຂຶ້ນໄປ.

**ມາດຕາ 5 ການມອບຊັບ**

ການມອບຊັບ ແມ່ນການເອົາຊັບທີ່ເປັນຫຼັກຊັບຄໍ້າປະກັນ, ຊັບທີ່ເປັນກໍາມະສິດຂອງລູກໜີ້ ຫຼື ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຫຼື ຊັບທີ່ໄດ້ຮັບສິດຈາກເຈົ້າຂອງຊັບ ມອບໃຫ້ເຈົ້າໜີ້ ເພື່ອໃຊ້ແທນໜີ້ສິນ, ຄ່າເສັຍຫາຍ ພາຍຫຼັງໄດ້ຕີລາຄາ ແລະ ປະກາດປະມູນຂາຍແລ້ວ ແຕ່ບໍ່ມີຜູ້ຊື້ຊັບດັ່ງກ່າວ.

**ມາດຕາ 6 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ນໍາໃຊ້ສະເພາະການຕີລາຄາ, ການປະມູນຂາຍ ແລະ ການມອບຊັບ ກ່ຽວກັບການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແລະ ນິຕິກໍາອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 5 (ໃໝ່) ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄໍາຕັດສິນຂອງສານເທົ່ານັ້ນ.

## ໝວດທີ 2
## ຄະນະກໍາມະການຕີລາຄາ ແລະ ປະມູນຂາຍຊັບ

**ມາດຕາ 7 ການປະກອບ ແລະ ສະເໜີແຕ່ງຕັ້ງຄະນະກໍາມະການ**

ຄະນະກໍາມະການຕີລາຄາ ແລະ ປະມູນຂາຍຊັບ ປະກອບດ້ວຍ ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ, ຜູ້ຕາງໜ້າສໍານັກງານອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຜູ້ຊ່ຽວຊານ ຫຼື ຜູ້ທີ່ມີປະສົບການທີ່ກ່ຽວຂ້ອງ, ນາຍບ້ານ ແລະ ບຸກຄົນອື່ນທີ່ເຫັນວ່າ ມີຄວາມຈໍາເປັນ.

ຄະນະກໍາມະການຕີລາຄາ ແລະ ປະມູນຂາຍຊັບຂອງຫ້ອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານນະຄອນຫຼວງ, ແຂວງ ແມ່ນເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ ຫຼື ຮອງເຈົ້າຄອງນະຄອນຫຼວງ, ຮອງເຈົ້າແຂວງທີ່ໄດ້ຮັບມອບໝາຍ ເປັນຜູ້ແຕ່ງຕັ້ງຕາມການສະເໜີຂອງຫົວໜ້າພະແນກຍຸຕິທໍານະຄອນຫຼວງ, ແຂວງ. ສ່ວນຄະນະກໍາມະການຕີລາຄາ ແລະປະມູນຂາຍຊັບຂອງໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານເມືອງ, ເທດສະບານ ແມ່ນເຈົ້າເມືອງ, ຫົວໜ້າເທດສະບານ ຫຼື ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານທີ່ໄດ້ຮັບມອບໝາຍ ເປັນຜູ້ແຕ່ງຕັ້ງຕາມການສະເໜີຂອງຫົວໜ້າຫ້ອງການຍຸຕິທໍາເມືອງ, ເທດສະບານ.

ການແຕ່ງຕັ້ງຄະນະກຳມະການດັ່ງກ່າວ ໃຫ້ແຕ່ງຕັ້ງສຳລັບແຕ່ລະຄະດີ ຫຼື ອາດຈະແຕ່ງເປັນຄະນະໜຶ່ງ ສຳລັບຫຼາຍຄະດີໃນເວລາດຽວກັນກໍໄດ້.

**ມາດຕາ 8 ທີ່ຕັ້ງ, ພາລະບົດບາດ ຂອງຄະນະກຳມະການຕີລາຄາ ແລະ ປະມູນຂາຍຊັບ**

ຄະນະກຳມະການຕີລາຄາ ແລະ ປະມູນຂາຍຊັບ ເປັນຜູ້ຕີລາຄາ ແລະ ປະມູນຂາຍຊັບໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານຕາມຂໍ້ຕົກລົງແຕ່ງຕັ້ງ ແລະ ຄະນະກຳມະການດັ່ງກ່າວ ຈະສິ້ນສຸດລົງ ເມື່ອປະຕິບັດໜ້າທີ່ສຳເລັດ.

ຄະນະກຳມະການຕີລາຄາ ແລະ ປະມູນຂາຍຊັບ ມີພາລະບົດບາດໃນການຕີລາຄາ ແລະ ດຳເນີນການປະມູນຂາຍຊັບ ທີ່ພົວພັນກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕາມຂໍ້ຕົກລົງທີ່ກ່ຽວຂ້ອງ. ພາຍຫຼັງຕີລາຄາ ແລະ ດຳເນີນການປະມູນຂາຍສຳເລັດແລ້ວ ກໍມອບໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ປະຕິບັດພາລະບົດບາດຈັດຕັ້ງປະຕິບັດຂັ້ນຕອນຕໍ່ໄປ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງຄະນະກຳມະການ**

ຄະນະກຳມະການຕີລາຄາ ແລະ ປະມູນຂາຍຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນກ່ຽວກັບຊັບທີ່ຈະຕີລາຄາໃຫ້ຖືກຕາມຄວາມເປັນຈິງ;
2. ກຳນົດມູນຄ່າຂອງຊັບ;
3. ດຳເນີນການປະມູນຂາຍຊັບ;
4. ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

**ມາດຕາ 10 ຫຼັກການເຄື່ອນໄຫວຂອງຄະນະກຳມະການຕີລາຄາ ແລະ ປະມູນຂາຍຊັບ**

ຄະນະກຳມະການຕີລາຄາ ແລະ ປະມູນຂາຍຊັບ ເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ເທິງນີ້ ບົນຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ສຽງສ່ວນໜ້ອຍ ຂຶ້ນກັບສຽງສ່ວນຫຼາຍ, ມີຄວາມໂປ່ງໃສ, ຍຸຕິທຳ, ເຄົາລົບ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 3
## ຂັ້ນຕອນ, ວິທີການຕີລາຄາ, ປະມູນຂາຍ ແລະ ມອບຊັບ

**ມາດຕາ 11 ຂັ້ນຕອນ, ວິທີການຕີລາຄາ, ປະມູນຂາຍ ແລະ ມອບຊັບ**

ຂັ້ນຕອນ, ວິທີການຕີລາຄາ, ປະມູນຂາຍ ແລະ ມອບຊັບ ມີດັ່ງນີ້:

1. ກວດກາ ແລະ ຂຶ້ນບັນຊີຊັບສິນ;
2. ອອກຄຳສັ່ງຍຶດ ຫຼື ອາຍັດຊັບ;
3. ແຈ້ງເປັນລາຍລັກອັກສອນ ຫຼື ສົ່ງຄຳສັ່ງຍຶດ, ຄຳສັ່ງອາຍັດຊັບ ໃຫ້ຜູ້ເປັນເຈົ້າຂອງ;
4. ຮຽກຜູ້ຖືກປະຕິບັດຄຳຕັດສິນ ຫຼື ຜູ້ເປັນເຈົ້າຂອງຊັບ ເຂົ້າມາເພື່ອເຮັດບົດບັນທຶກຮັບຊາບ;